ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 08 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 12 ກຸມພາ 2016


ສຳນັກງານ ຄຄຊ

ເຂົ້າ ເລກທີ 0125

ວັນທີ 15 FEB 2016

ໂທລະສັບ 021 217770


**ລາຍງານການເຄື່ອນໄຫວປະຈຳອາທິດ**

**ທີ 01/02/2016 ຫາ 05/02/2016 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ**

**ຂອງທະນາຄານແຫ່ງ ສປປ ລາວ**

I. <u>ວຽກງານການເມືອງແນວຄິດ</u>

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

II. <u>ວຽກງານວິຊາສະເພາະ</u>

1. <u>ສະພາບເສດຖະກິດເງິນຕາສາກົນ</u>

1.1 <u>ອັດຕາແລກປ່ຽນສາກົນ</u>

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາອ່ອນຄ່າລົງ ເມື່ອທຽບໃສ່ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີ ຍ້ອນຕົວເລກທາງດ້ານເສດຖະກິດ ສ. ອາເມລິກາ ອອກມາບໍ່ດີ ເປັນຕົ້ນແມ່ນຕົວເລກການຂະຫຍາຍຕົວຂອງເສດຖະກິດຫຼຸດລົງ 0,7% ໃນໄຕມາດ 4/2015 ຈາກ 2% ໃນໄຕມາດ 3/2015.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 26/01/2016 | ອາທິດນີ້ 02/02/2016 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,0850 | 1,0903 | -0,49% |
| ໂດລາ/ເຢນ | 118,03 | 120,70 | -2,21% |
| ໂດລາ/ບາດ | 35,96 | 35,67 | 0,82% |
| ໂດລາ/ເປໂຊ | 47,99 | 47,73 | 0,54% |
| ໂດລາ/ຣູເປັຍ | 13.898,78 | 13.639,44 | 1,90% |
| ໂດລາ/ໂດລາສິງກະໂປ | 1,4304 | 1,4241 | 0,45% |
| ໂດລາ/ຢວນ | 6,5796 | 6,5787 | 0,01% |

1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 5,24% ຈາກ 31,14 ໂດລາ/ບາເຣວ ມາເປັນ 32,77 ໂດລາ/ບາເຣວ ຍ້ອນຄັງສຳຮອງນ້ຳມັນສຳເລັດຮູບຂອງ ສ.ອາເມລິກາ ໃນອາທິດທີ 22/1/2016 ຫຼຸດລົງ 4,05 ລ້ານບາເຣວ ຈາກຫຼຸດລົງ 1,02 ລ້ານບາເຣວໃນອາທິດຜ່ານມາ.

ລາຄາຄຳໃນຕະຫຼາດໂລກເພີ່ມຂຶ້ນ 1,21% ຈາກ 1.112,48 ໂດລາ/ອອນ ມາເປັນ 1.125,99 ໂດລາ/ອອນ ຍ້ອນນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກງກຳໄລ ແລະ ປ້ອງກັນຄວາມສ່ຽງ ບວກກັບການອ່ອນຄ່າລົງຂອງເງິນໂດລາສະຫະລັດໃນຕະຫຼາດສາກົນ.

2. ສະພາບເສດຖະກິດເງິນຕາພາຍໃນ

2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,15% ສຳລັບອັດຕາ ທທກ ແຕ່ອ່ອນຄ່າລົງ 0,68% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 0,87% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,76% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,14% ສຳລັບອັດຕາ ທທກ ແຕ່ອ່ອນຄ່າລົງ 0,44% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 0,88% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,33% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 26/01/2016 | | | ອາທິດນີ້ 02/02/2016 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.143,91 | 8.172,71 | 8.153,52 | 8.135,30 | 8.164,24 | 8.141,43 | 0,11% | 0,104% | 0,15% |
| ບາດ | 226,81 | 228,46 | 228,33 | 229,04 | 230,43 | 230,33 | -0,97% | -0,86% | -0,87% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.157,72 | 8.206,00 | 8.181,86 | 8.149,85 | 8.325,60 | 8.237,73 | 0,10% | -1,44% | -0,68% |
| ບາດ | 227,43 | 228,37 | 227,90 | 229,03 | 230,27 | 229,65 | -0,69% | -0,83% | -0,76% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,17% | 0,41% | 0,35% | 0,18% | 1,98% | 1,18% | | | |
| ບາດ | 0,28% | -0,04% | -0,19% | -0,01% | -0,07% | -0,30% | | | |

2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ຫຼຸດລົງ 0,62% ທຽບໃສ່ວັນທີ 29/01/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 20,25%;
- ປະລິມານເງິນ M2 ຫຼຸດລົງ 0,51% ເມື່ອທຽບໃສ່ວັນທີ 29/01/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 12,20%.

2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 02/02/2016) ເຫັນວ່າ ທທກ ຂາຍໂດລາສຸດທິ 7,13 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 43,43 ລ້ານໂດລາ ແລະ ຂາຍໂດລາໄດ້ 50,56 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 208,48 ລ້ານບາດ (ໃນນີ້ ຊື້ບາດໄດ້ 327,14 ລ້ານບາດ ແລະ

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ຂາຍບາດໄດ້ 535,61 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາ ຫຼຸດລົງ 37,66% ແລະ ຫຼຸດລົງ 36,28% ສໍາລັບເງິນບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈໍານວນ 20,34 ລ້ານ ໂດລາ ແລະ ເງິນບາດມີຈໍານວນ 37,80 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈໍານວນ 24,64 ລ້ານໂດລາ ແຕ່ຊື້ເງິນບາດ ສຸດທິ ຈໍານວນ 270 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈໍານວນ 79,77 ລ້ານໂດລາ ແຕ່ ຊື້ບາດໄດ້ສຸດທິ ຈໍານວນ 2.944,65 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 26/01/2016 | | ອາທິດທີ 02/02/2016 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 59,93 | 153,75 | 18,59 | 196,12 | -68,98% | 27,56% |
| - ທ/ຄທຸລະກິດອື່ນໆ | 37,60 | 164,29 | 24,84 | 131,01 | -33,92% | -20,26% |
| ລວມຊື້: | **97,53** | **318,04** | **43,43** | **327,14** | **-55,47%** | **2,86%** |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 12,66 | 162,08 | 28,99 | 147,45 | 129,10% | -9,03% |
| - ທ/ຄທຸລະກິດອື່ນໆ | 40,59 | 873,82 | 21,56 | 388,17 | -46,88% | -55,58% |
| ລວມຂາຍ: | **53,25** | **1.035,89** | **50,56** | **535,61** | **-5,06%** | **-48,29%** |
| ຊື້-ຂາຍສຸດທິ ທທກ | **44,28** | **-717,85** | **-7,13** | **-208,48** | **-116,09%** | **-70,96%** |
| ຜິດດ່ຽງ ຊື້-ຂາຍ | 45,40 | -225,71 | -16,41 | -63,73 | -618,85% | 161,28% |
| ມູນຄ່າການຊື້-ຂາຍ | **150,78** | **1.353,93** | **93,99** | **862,75** | **-37,66%** | **-36,28%** |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 0,00 | 30,00 | 0,00 | 270,00 | | |
| - ທຫລ ຂາຍໃຫ້ ທທກ | 31,31 | 10,00 | 24,64 | 0,00 | | |
| ຊື້-ຂາຍສຸດທິ ທຫລ | **-31,31** | **20,00** | **-24,64** | **270,00** | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **5,97** | **70,50** | **20,34** | **37,80** | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,41 | 4.272,13 | 0,14 | 2.944,65 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 136,96 | 0,00 | 79,91 | 0,00 | | |
| ຊື້-ຂາຍສຸດທິ ທຫລ | **-136,55** | **4.272,13** | -79,77 | **2.944,65** | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ ໃນເດືອນ 01/2016 ຢູ່ໃນລະດັບ 0,87% (ຕົວເລກຄາດຄະເນ) ຫຼຸດລົງເລັກນ້ອຍ ຈາກ 0,90% ສາເຫດ ຍ້ອນລາຄາຂາຍຍ່ອຍນໍ້າມັນຫຼຸດລົງ ບວກກັບໝວດອາຫານ ເພີ່ມຂຶ້ນໃນຈັງວະຊ້າລົງ.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 226,23 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງເພີ່ມຂຶ້ນ 9,2% ທຽບໃສ່ອາທິດຜ່ານມາ.

### 2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 837 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 11,30% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 579,72 ຕື້ກີບ ຫຼຸດລົງ 29,85% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (29/01-04/02/2016) ມີຈຳນວນ 2.132 ຄັ້ງ ໂດຍມີມູນຄ່າ 584,63 ຕື້ກີບ ຫຼຸດລົງ 36,67% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 491 ຄັ້ງ.

### 2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ປິດຢູ່ທີ່ 1.161.89 ຈຸດ, ຫຼຸດລົງ 1,40% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດມີປະລິມານຊື້-ຂາຍຮຸ້ນທັງໝົດ 169.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 685,75 ລ້ານກີບ, ຫຼຸດລົງ 97,50% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 47,43% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 4.771 ກີບ/ຮຸ້ນ, ຫຼຸດລົງ 215 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 49.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 234,28 ລ້ານກີບເພີ່ມຂຶ້ນ 967,82% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍໃນອາທິດນີ້ ຜູ້ລົງທຶນຕ່າງປະເທດ ປະເພດສະຖາບັນ ຈາກໝູ່ເກາະເຄແມນ ເປັນຜູ້ຂາຍ ແລະ ຜູ້ລົງທຶນພາຍໃນປະເທດ ເປັນຜູ້ຊື້ເປັນສ່ວນໃຫຍ່. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,71%[2].

ຮຸ້ນຂອງບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.873 ກີບ/ຮຸ້ນ, ຫຼຸດລົງ 27 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 37.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 217,89 ລ້ານກີບ, ຫຼຸດລົງ 99,19% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍ ຂອງຜູ້ລົງທຶນຕ່າງປະເທດກວມເອົາ 68,65% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,84%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດທີ່ 7.000 ກີບ/ຮຸ້ນ, ຫຼຸດລົງ 100 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ. ໂດຍໃນອາທິດນີ້ບໍ່ມີການຈັບຄູ່ຊື້-ຂາຍຮຸ້ນ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.818 ກີບ/ຮຸ້ນ, ຫຼຸດລົງ 32 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 82.900 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 233,58 ລ້ານກີບ, ເພີ່ມຂຶ້ນ 10.144,74%. ໂດຍສາເຫດທີ່ຮຸ້ນ PTL ປັບຕົວຂຶ້ນສູງໃນອາທິດນີ້ ແມ່ນເກີດຈາກການຊື້-ຂາຍກັນເອງຂອງຜູ້ລົງທຶນພາຍໃນ ຈຳນວນ 58.300 ຮຸ້ນ ໃນວັນທີ 01 ມັງກອນ ແລະ ການຂາຍອອກຂອງຜູ້ລົງທຶນຕ່າງປະເທດ ປະເພດສະຖາບັນຈາກປະເທດໄທ 22.200 ຮຸ້ນ ໃນວັນທີ 02 ມັງກອນ 2016. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,68%[5].

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາປິດທີ່ 3.400 ກີບ/ຮຸ້ນ, ເພີ່ມຂຶ້ນ 52 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ໂດຍໃນອາທິດນີ້ບໍ່ມີການຈັບຄູ່ຊື້-ຂາຍຮຸ້ນ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,21%[6].

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ່ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ່ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ່ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ່ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

[6] ສັດສ່ວນຖືຄອງຮຸ້ນ SVN ຂອງຜູ່ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ສຳເລັດການຈັດກອງປະຊຸມ ແລະ ຝຶກອົບຮົມ: ❶ຝຶກອົບຮົມໃຫ້ແກ່ບັນດາ ທຫລ ສາຂາ ປະຈຳແຕ່ລະພາກ ກ່ອນການລົງກວດກາປະຈຳປີ 2015 ທີ່ຫ້ອງປະຊຸມກົມຄຸ້ມຄອງສະຖາບັນການເງິນ, ❷ຝຶກອົບຮົມວຽກງານການຄຸ້ມຄອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ໃຫ້ແກ່ພະນັກງານ ທຫລ, ❸ ກອງປະຊຸມສະໄໝວິສາມັນຂອງຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຄັ້ງທີ I ທີ່ ທຫລ;
- ສຳເລັດການເຂົ້າຮ່ວມກອງປະຊຸມ: ❶ກອງປະຊຸມຜ່ານຮ່າງດຳລັດວ່າດ້ວຍການປົກປ້ອງຜູ້ຝາກ (ຮອບ II ) ທີ່ ທຫລ, ❷ກອງປະຊຸມສະຫຼຸບຖອດຖອນບົດຮຽນ ແລະ ວາງແຜນການເຄື່ອນໄຫວວຽກງານປະຊາສຶກສາທາງດ້ານການເງິນຢູ່ນະຄອນຫຼວງວຽງຈັນ, ❸ກອງປະຊຸມກ່ຽວກັບບົດກຳກັບການຮ່ວມມື (SOC) ລະຫວ່າງ ສຕຟງ ກັບໜ່ວຍງານຂ່າວກອງທາງດ້ານການເງິນຍີ່ປຸ່ນ (JAFIC) ທີ່ຫ້ອງວ່າການລັດຖະບານ;
- ສຳເລັດພິທີການປະກາດສ້າງຕັ້ງໜ່ວຍງານຂໍ້ມູນຕ້ານການຟອກເງິນຂຶ້ນເປັນສຳນັກງານຂໍ້ມູນຕ້ານການຟອກເງິນ ທີ່ ທຫລ;
- ສຳເລັດຮ່າງແຜນວຽກປະຈຳປີ 2016 ຂອງວຽກງານໂຄງການ MAFIPP;
- ສຳເລັດການວາງແຜນດຳເນີນການກວດກາປະສິດທິພາບລະບົບຮັກສາຄວາມປອດໄພລະບົບເຄືອຂ່າຍ (Firewall) ປະຈຳຕົ້ນປີ 2016;
- ສຳເລັດການປັບປຸງຮ່າງຂໍ້ຕົກລົງວ່າດ້ວຍການໂອນເງິນແບບທັນທີ.

III. ແຜນວຽກຈຸດສຸມອາທິດຕໍ່ໄປ:

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາລະຫວ່າງທະນາຄານ;
- ສືບຕໍ່ຄົ້ນຄວ້າ: ❶ຄົ້ນຄວ້າລະບຽບກ່ຽວກັບການປັບໄໝ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❷ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິ ບັດ, ❸ຄົ້ນຄວ້າ ແລະ ປັບປຸງຮ່າງຄຳແນະນຳວ່າດ້ວຍການຍຶດ ຫຼື ອາຍັດທຶນ ທີ່ພົວພັນກັບການຟອກເງິນ, ❹ຄົ້ນຄວ້າໂຄງສ້າງຂອງຮ່າງດຳລັດ ວ່າດ້ວຍການເຄື່ອນໄຫວວຽກງານຂໍ້ມູນສິນເຊື່ອ;
- ກະກຽມການແຂ່ງຂັນກິລາມິດຕະພາບລະຫວ່າງທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງປະເທດໄທ;
- ກະກຽມການເປັນປະທານ ແລະ ເຈົ້າພາບ ກອງປະຊຸມຂັ້ນສູງອາຊຽນ ແລະ ອາຊຽນ+3 ຂອງ ສປປ ລາວ ປີ 2016;
- ສືບຕໍ່ປະຕິບັດເງື່ອນໄຂ PRSO 8-11 (ປີ2012-2015).

ຮັບ ແທນ ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ອຸດຕະລາ ແກ້ວທາວົງ